## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 30 ກໍຣະກະດາ 2023 (07-30-2023)

---

## ແຍກອອກແຕ່ບໍ່ຢູ່ຢ່າງໂດດດ່ຽວ

*ແມ່ນຫຍັງເຮັດໃຫ້ຄົນສລາດທີ່ສຸດທີ່ທ່ານຮູ້ຈັກເບິ່ງຄືວ່າສລາດ?*

**ຈຸດສຳຄັນໃນບົດຮຽນ:** ພຣະວິນຍານບໍຣິສຸດຊ່ວຍເຮົາໃຫ້ຮູ້ວິທີດຳເນີນຊີວິດທີ່ບໍຣິສຸດ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ໃນການເດີນທາງໄປເອີຣົບເມື່ອບໍ່ດົນມານີ້, ຂ້າພະເຈົ້າໄດ້ໄປຢ້ຽມຢາມປະເທດກຣີກ, ເປັນທີ່ຮູ້ຈັກກັນດີສຳລັບປວັດຕິສາດທີ່ຍິ່ງໃຫ່ຍ. ສິ່ງທີ່ໜ້າສົນໃຈ, ຄຳວ່າ "ປຣັຊຍາ" ມາຈາກພາສາກຣີກ, ຊຶ່ງມີຄວາມໝາຍວ່າ "ຜູ້ຮັກສະຕິປັນຍາ". ເປັນເວລາຫຼາຍສະຕະວັດແລ້ວ, ຫຼາຍຄົນຖືວ່າຄຳທຳນວາຍຂອງກຣີກທີ່ ແດວພີ (**Delphi**), ວ່າເປັນແຫ່ງດຽວທີ່ເປັນແຫຼ່ງທີ່ຍິ່ງໃຫຍ່ຂອງສະຕິປັນຍາ. ຄຳພະຍາກອນຂອງນັກບວດຜູ້ຍິງ **Pythia**, ໄດ້ຖືກຊອກຫາໂດຍປະຊາຊົນຈາກທົ່ວໂລກ. ໃນຄວາມຫວັງທີ່ຈະຮຽນຮູ້ສິ່ງທີ່ເອີ້ນວ່າພະເຈົ້າ, ອາໂປໂລ, ອາດຈະເວົ້າຜ່ານນາງກ່ຽວກັບການຊຳລະລ້າງຄວາມຜິດບາບ, ອະນາຄົດ, ແລະຄວາມປາຖນາຂອງພໍ່ຂອງລາວ, ຊູສ (**Zeus**) ຕໍ່ມາໃນກຸງອາແຖນ (Athens), ໂຊກຣາຕີສ (Socrates), ປລາໂຕ (**Plato**) ແລະ ອາຣິສຕໍໂຕ (**Aristotle**) ໄດ້ໃຊ້ເວລາຂອງເຂົາສົນທະນາແນວຄວາມຄິດຫຼ້າສຸດແລະຍິ່ງໃຫ່ຍທີ່ສຸດ, ຕໍ່ມາໜ້ອຍນຶ່ງ, ຈັກກະພັດໂຣມັນໄດ້ມອບຂອງຂວັນໃຫ້ກຸງອາແຖນດ້ວຍຫໍສມຸດຂອງແຮດຣຽນ (Hadrian), ເຊິ່ງເປັນບ່ອນຍິ່ງໃຫຍ່ບ່ອນນຶ່ງໃນການເກັບມ້ຽນຄວາມຮູ້ຂອງມະນຸດທີ່ເກີດມີມາ.

ປະເພນີກຣີກຊອກຫາຄວາມເຂົ້າໃຈ "ຊີວິດທີ່ດີ." ພວກເຂົາໄດ້ສແວງຫາຄຸນງາມຄວາມດີຂອງປັນຍາ, ແຕ່ປັນຍາເຫຼົ່ານີ້ບໍ່ໄດ້ມີຮາກຖານໃນປັນຍາຂອງພຣະເຈົ້າ. ອັຄສາວົກໂປໂລໄດ້ເປີດເຜີຍຂໍ້ບົກພ່ອງນີ້ໃນລະຫວ່າງການເດີນທາງເຜີຍແຜ່ຂ່າວປະເສີດຂອງເພິ່ນ (ກິຈການ 17:16). ດຽວນີ້, ຄືກັບຕອນນັ້ນ, ຜູ້ຄົນຊອກຫາຄຳແນະນຳກ່ຽວກັບວິທີການດຳເນີນຊີວິດ. ໃນການສຶກສານີ້, ພວກເຮົາຈະໄດ້ຮຽນຮູ້ວິທີທີ່ພຣະວິນຍານບໍຣິສຸດຊ່ວຍເຮົາໃຫ້ຮູ້ວິທີດຳເນີນຊີວິດໃນແບບວິທີທີ່ພຣະເຈົ້າຊົງພໍພຣະທັຍ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### <u>ສຶກສາພຣະຄັມພີ</u>

### 1. 1 ໂກຣິນໂທ 2:6-9.

*6. ເຖິງປານນັ້ນເຮົາກໍເຄີຍກ່າວດ້ວຍສະຕິປັນຍາໃນຖ້າມກາງຄົນທີ່ແກ່ແລ້ວແຕ່ບໍ່ແມ່ນດ້ວຍປັນຍາຂອງຄົນສມັຍນີ້ຫລືດ້ວຍປັນຍາຂອງພວກຜູ້ປົກຄອງໃນສມັຍນີ້ຊຶ່ງກຳລັງເສື່ອມສູນໄປ. 7. ແຕ່ເຮົາກ່າວດ້ວຍພຣະປັນຍາຂອງພຣະເຈົ້າຊຶ່ງເປັນຂໍ້ລັບເລິກຄືພຣະສະຕິປັນຍາທີ່ຊົງເຊື່ອງໄວ້ນັ້ນແລະທີ່ພຣະເຈົ້າໄດ້ຊົງກຳນົດໄວ້ກ່ອນປະຖົມມະການເພື່ອເປັນ ສງ່າຣາສີແກ່ພວກເຮົາ. 8. ບໍ່ມີຜູ້ປົກຄອງຄົນໃດໃນສມັຍນີ້ໄດ້ຮູ້ເຖິງພຣະປັນຍານັ້ນເພາະວ່າຖ້າຮູ້ແລ້ວເຂົາຄົງຈະບໍ່ໄດ້ເອົາອົງພຣະຜູ້ເປັນເຈົ້າຜູ້ຊົງຣັສມີຄິງໄວ້ທີ່ໄມ້ກາງແຂນ. 9. ແຕ່ເໝືອນມີຄຳຂຽນໄວ້ໃນພຣະຄັມພີແລ້ວວ່າ, "ສິ່ງທີ່ຕາບໍ່ໄດ້ເຫັນ, ຫູບໍ່ໄດ້ຍິນ, ແລະສິ່ງທີ່ມະນຸດຄຶດບໍ່ອອກຄືສິ່ງນັ້ນທີ່ພຣະເຈົ້າໄດ້ຊົງຈັດແຈງໄວ້ສຳລັບຄົນທີ່ຮັກພຣະອົງ."*

ເຖິງແມ່ນວ່າພວກເຮົາມີຊີວິດຢູ່ໃນໂລກທີ່ເບິ່ງຄືວ່າກ້າວໜ້າທັນສມັຍຫຼາຍກ່ວາສະຕະວັດທຳອິດ ແຕ່ບັນຫາທີ່ອັຄສາວົກໂປໂລຍົກຂຶ້ນມາເວົ້າໃນ 1 ໂກຣິນໂທ ສ່ວນຫຼາຍແມ່ນຄືກັນ. ທ່ານກຳລັງເປັນພະຍານເຖິງຄວາມບົກພ່ອງຂອງປັນຍາຂອງໂລກປະຈຸບັນແລະຜູ້ທີ່ປົກຄອງມັນ. "ບໍ່ມີປໂຍດຫັຽງເລີຍ." ຄວາມສິ້ນຫວັງທັງໝົດຂອງມັນ, ແມ່ນແຕ່ພວກເຮົາທີ່ນອນຢູ່ໃນຄວາມຮູ້ແລະສະຕິປັນຍາຂອງໂລກ

ຍັງບໍ່ສາມາດຄາດຄິດໄດ້ເທົ່າກັບທົດສະວັດກ່ອນ, ໄດ້ເຮັດໃຫ້ເກີດການແຜ່ລະບາດຄວາມເຈັບປວດທາງດ້ານຈິດໃຈແລະຄວາມສິ້ນຫວັງ.

ໃນທາງກົງກັນຂ້າມ, ລູກໆຂອງພຣະເຈົ້າມີທາງຜ່ານເຂົ້າເຖິງນໍ້າພຸແຫ່ງສະຕິປັນຍາ, <u>ພຣະວິນຍານບໍຣິສຸດ</u>, ພຣະອົງໄດ້ສອນພວກເຮົາຜ່ານທາງພາຍໃນຂອງພວກເຮົາໂດຍການສ່ອງແສງສວ່າງຂອງເບື້ອງເທິງຄືພຣະຄໍາຂອງພຣະເຈົ້າແລະໃຫ້ແສງສວ່າງແຫ່ງຄວາມຈິງນັ້ນ. ຄວາມຮູ້ຈາກເບື້ອງເທິງແມ່ນກວ້າງໄກກວ່າຫຼາຍຊຶ່ງເໜືອຂໍ້ມູນຕ່າງໆ, ເຣື່ອງເລັກໆນ້ອຍໆ, ແລະຄວາມຮູ້ດ້ານວິຊາການທີ່ມີຢູ່ໃນອິນເຕີເນັດ. ສະຕິປັນຍາອັນເຊື່ອງຊ້ອນຂອງພຣະເຈົ້າໄດ້ປົກຄຸມເໜືອທຸກສິ່ງທີ່ມີຢູ່ກັບເຮົາໃນຫ້ອງໂຖງຂອງມະຫາວິທະຍາໄລທຸກວັນນີ້, ບ່ອນເກັບຄໍາຄິດຄໍາເຫັນຂອງທົ່ວໂລກແລະຊຸມຊົນສາສນາອື່ນໆທັງປວງ.

*ມີບາງບ່ອນໃດແດ່ທີ່ທ່ານເຫັນສະຕິປັນຍາຂອງພຣະເຈົ້າກົງກັນຂ້າມກັບສະຕິປັນຍາຝ່າຍໂລກ?*

ເຊັ່ນດຽວກັບອັຄສາວົກກ່ອນພວກເຮົາ, ພວກທີ່ເຊື່ອທີ່ໄດ້ຖືກເຈີມທາງຈິດໃຈໂດຍຄວາມຫຼົງເຫັນຈາກເບື້ອງເທິງແລະສິດອໍານາດຂອງພຣະຄັມພີມີທັສນະສອດຄ່ອງແລະຄວາມເຂົ້າໃຈໃນຄວາມຈິງ. ສິ່ງເຫຼົ່ານີ້ຈະຊ່ວຍໃຫ້ພວກເຮົາຮູ້ວິທີດໍາເນີນຊີວິດທີ່ບໍຣິສຸດທີ່ຖືກແຍກອອກຕັ້ງໄວ້ແລ້ວ, ເຖິງແມ່ນວ່າເມື່ອພວກເຮົາພົບຕົວເຮົາເອງຢູ່ຄົນດຽວ, ສັບສົນ, ຖືກປະຖິ້ມ, ຫຼືໄດ້ຫ່າງເຫີນ. ເມື່ອເຮົາສື່ສານກັບຜູ້ອື່ນໂດຍໃຊ້ສິດອໍານາດຂອງພຣະຄັມພີ, ພຣະເຈົ້າສາມາດໃຊ້ພວກເຮົາເພື່ອເວົ້າຄວາມຈິງໃນຊີວິດຂອງຄົນອື່ນໆ. ສະຕິປັນຍາທີ່ບໍ່ທັມມະດານີ້ເປັນຄວາມລຶກລັບຂອງຫຼາຍຄົນທີ່ຢູ່ອ້ອມຮອບຕົວເຮົາ, ຮວມທັງຜູ້ນໍາທາງສັງຄົມ, ການສຶກສາ, ດ້ານການເມືອງ, ແລະພວກຜູ້ນໍາສາສນາ.

ດຽວນີ້, ຄືກັບສມັຍຂອງໂປໂລ, ຜູ້ເຊື່ອເວົ້າຄວາມຈິງໂດຍການນໍາພາຂອງພຣະວິນຍານບໍຣິສຸດແລະພຣະຄໍາຂອງພຣະເຈົ້າແມ່ນຖືກເຍາະເຍີ້ຍແລະເຮັດໃຫ້ເປັນເປົ້າຂອງການຫົວເລາະແລະການເຍາະເຍີ້ຍຂອງຄົນອື່ນໆ. ຈິດວິນຍານອັນດຽວກັນນັ້ນທີ່ຕໍ່ຕ້ານພຣະຄຣິດເປັນສິ່ງນໍາໄປສູ່ການຄຶງອົງພຣະຜູເປັນເຈົ້າຂອງພວກເຮົາແລະມັນເປັນແຫຼ່ງທີ່ມາຂອງການຫຼອກລວງຄຣິສະຕຽນໃນທຸກໆວັນນີ້. ລູກໆຂອງພຣະເຈົ້າຕ້ອງປະຕິເສດຄວາມຄິດເຖິງຄວາມຄິດທີ່ສລາດຂອງພວກເຮົາຫຼືການເຂົ້າໄປໃນຄວາມເຂົ້າໃຈທີ່ເລິກເຊິ່ງ. ຄວາມເຂົ້າໃຈທີ່ມີຄຸນຄ່າແທ້ໆທີ່ພວກເຮົາມີແມ່ນບໍ່ມີຫັຽງນອກເໜືອຈາກການສະທ້ອນຈາກບຸກຄົນຂອງພຣະເຈົ້າ. ເຖິງຢ່າງນັ້ນ, ນັກສຶກສາພຣະຄັມພີຜູ້ທີ່ຍອມຈໍານົນຕໍ່ພຣະວິນຍານບໍຣິສຸດມັກຈະພົບກັບຄວາມຈິງທີ່ປະເສີດເກີນໄປສໍາລັບພວກເຮົາແລະສູງເກີນໄປທີ່ຈະບັນລຸໄດ້ (ເພງສັຣເສີນ 139).

## 2. 1 ໂກຣິນໂທ 2:10-13.

*10. ແຕ່ພຣະເຈົ້າໄດ້ຊົງສະແດງສິ່ງເຫລົ່ານັ້ນແກ່ເຮົາທັງຫລາຍທາງພຣະວິນຍານ ເພາະວ່າພຣະວິນຍານຊົງຢັ່ງຮູ້ທຸກສິ່ງ ແມ່ນເປັນຄວາມເລິກລັບຂອງພຣະເຈົ້າ. 11. ດ້ວຍວ່າໃຜໜໍ, ອາດຮູ້ຄວາມຄຶດຂອງມະນຸດໄດ້ ເວັ້ນແຕ່ຈິດວິນຍານພາຍໃນມະນຸດຜູ້ນັ້ນເອງ ດັ່ງນັ້ນແຫລະ, ພຣະທັຍຂອງພຣະເຈົ້າບໍ່ມີຜູ້ໃດຮູ້ໄດ້ ເວັ້ນແຕ່ພຣະວິນຍານຂອງພຣະເຈົ້າເທົ່ານັ້ນ. 12. ເຮົາທັງຫຼາຍບໍ່ໄດ້ຮັບວິນຍານຂອງໂລກ ແຕ່ໄດ້ຮັບພຣະວິນຍານຊຶ່ງມາຈາກພຣະເຈົ້າ ເພື່ອເຮົາທັງຫລາຍຈະໄດ້ຮູ້ ເຖິງສິ່ງຕ່າງໆທີ່ພຣະເຈົ້າໄດ້ຊົງໂຜດປະທານແກ່ພວກເຮົານັ້ນ. 13. ເຮົາບໍ່ໄດ້ກ່າວສິ່ງເຫລົ່ານີ້ດ້ວຍຖ້ອຍຄໍາຊຶ່ງປັນຍາຂອງມະນຸດສອນໄວ້ ແຕ່ດ້ວຍຖ້ອຍຄໍາຊຶ່ງພຣະວິນຍານໄດ້ຊົງສັ່ງສອນ ຄືເຮົາໄດ້ອະທິບາຍຄວາມໝາຍຂອງເຣື່ອງຝ່າຍວິນຍານໃຫ້ຄົນທີ່ມີພຣະວິນຍານຟັງ.*

ມັນສະໝອງຂອງພວກເຮົາແມ່ນໄດ້ຮັບມາຈາກຄວາມສາມາດອັນຍິ່ງໃຫຍ່ຂອງພຣະເຈົ້າ. ເຖິງແມ່ນວ່າພຣະຄໍາຂອງພຣະເຈົ້າໄດ້ຮັບມາຈາກການດົນໃຈ, ບໍ່ມີຂໍ້ຜິດພາດແລະບໍ່ມີຄໍາເວົ້າທີ່ຜິດພາດມາຈາກຄວາມຄິດແລະສະຕິປັນຍາຂອງພຣະເຈົ້າ, ມັນໄດ້ຖືກຖ່າຍທອດຜ່ານທາງສະໝອງຂອງນັກປຣາດ, ອັຄສາວົກ, ຫຼືຜູ້ຂຽນທີ່ໄດ້ຮັບການດົນໃຈຈາກພຣະເຈົ້າໃຫ້ຂຽນຂຶ້ນ. ມັນເປັນການຍາກທີ່ຈະຈິນຕະນາການວ່າພຣະເຈົ້າ, ເປັນເໝືອນວັດຖຸບູຮານ, ບໍ່ໄດ້ໃຫ້ຄວາມຈິງອັນສູງສົ່ງຂອງພຣະອົງໂດຍກົງກັບໂລກໂດຍທີ່ມະນຸດບໍ່ມີສ່ວນຮ່ວມໃນຂັ້ນຕອນນັ້ນ. ແທນທີ່ຈະເປັນດັ່ງນັ້ນ, ພຣະເຈົ້າໄດ້ເລືອກໃຊ້ຜູ້ທີ່ສັດຊື່ຢ່າງເລິກເຊິ່ງ, ແຕ່ຍັງມີຂໍ້ບົກຜ່ອງ, ເພື່ອຊ່ວຍເຫຼືອໃນການສົ່ງ

ຕໍ່ພຣະຄຳຂອງພຣະເຈົ້າ. ດັ່ງທີ່ເປັນຢູ່, ພຣະວິນຍານບໍຣິສຸດໄດ້ຊ່ວຍປ້ອງກັນຄວາມຜິດພາດຂອງມະນຸດໃນການຂຽນ. ສະຕິປັນຍາອັນສູງສົ່ງໄດ້ສົ່ງຜ່ານຈິດວິນຍານຂອງມະນຸດຜູ້ທີ່ຂຽນຂຶ້ນ. ແລະໃນທີ່ສຸດໄດ້ຖືກຂຽນຂຶ້ນດ້ວຍມືເປັນປຶ້ມພຣະຄັມພີທີ່ສັກສິດ.

ບາງຢ່າງທີ່ເປັນປົກກະຕິຂອງຄວາມເຂົ້າໃຈຜິດໂດຍຜູ້ທີ່ບໍ່ຄຸ້ນເຄີຍກັບວິທີທີ່ພຣະເຈົ້າສ້າງມະນຸດແມ່ນຂໍ້ມູນຈິງທີ່ວ່າສະໝອງແລະຈິດໃຈບໍ່ແມ່ນສິ່ງດຽວກັນ. ຄົນເຮົາມີພຽງຈິດໃຈແລະເອກະລັກເທົ່ານັ້ນ. ອັນນີ້ລວມເຖິງພຣະເຈົ້າ, ເທວະດາ, ແລະມະນຸດ. ດັ່ງນັ້ນ, ໃນຂນະທີ່ສະໝອງເປັນສ່ວນນຶ່ງຂອງຮ່າງກາຍ, ຈິດໃຈແມ່ນສ່ວນນຶ່ງຂອງສິ່ງທີ່ພວກເຮົາຄິດວ່າເປັນທັມມະຊາດທາງຝ່າຍຈິດວິນຍານຂອງມະນຸດ. ບໍ່ພຽງແຕ່ຄວາມຈິງນັ້ນຢູ່ໃນພຣະຄັມພີ, ແຕ່ຫຼັກຖານຂອງເຣື່ອງນີ້ໄດ້ຖືກຄົ້ນພົບໃນການຄົ້ນຄ້ວາສະໝອງທີ່ທັນສມັຍ. ເວົ້າຫຍໍ້ໆ, ມະນຸດບໍ່ໄດ້ຖືກສ້າງຂຶ້ນຈາກວັດຖຸເທົ່ານັ້ນ, ພວກເຮົາຍັງມີສິ່ງສຳຄັນທີ່ບໍ່ເປັນວັດຖຸ, ທີ່ບໍ່ກ່ຽວກັບຮ່າງກາຍ, ແລະເປັນຝ່າຍວິນຍານ. ຂນະທີ່ພວກທີ່ເຊື່ອພິຈາຣະນາເບິ່ງຄວາມມະຫັສຈັນຂອງວິທີທີ່ພຣະເຈົ້າສ້າງພວກເຮົາ, ພວກເຮົາຕ້ອງເຂົ້າໃຈວ່າປາສຈາກການທຳງານຂອງພຣະວິນຍານບໍຣິສຸດ, ພວກເຮົາຈະບໍ່ສາມາດເຂົ້າໃຈເຣື່ອງຂອງພຣະເຈົ້າໄດ້. ຈິດໃຈທີ່ບໍ່ຍອມຮັບສິດອຳນາດຂອງພຣະວິນຍານບໍຣິສຸດຈະຊອກຫາທາງທີ່ຈະເຂົ້າໃຈຜິດຕໍ່ການກະທຳຂອງພຣະເຈົ້າໃນຊີວິດຂອງເຮົາໂດຍບໍ່ຕັ້ງໃຈ.

ພຣະວິນຍານບໍຣິສຸດມີຜົນກະທົບທາງຄວາມຄິດແລະຄວາມສາມາດຂອງພວກເຮົາຢ່າງໃຫ່ຍຫຼວງກ່ຽວກັບການຮິ່ນຕອງໃນເຣື່ອງຄວາມຈິງ, ການຕີຄວາມໝາຍຂອງພຣະຄັມພີ, ແລະຮູ້ຖືກຮູ້ຜິດ. ຄວາມສາມາດນີ້ແມ່ນມີໃຫ້ເປັນອິດສະລະພາບສຳລັບທຸກຄົນຜູ້ທີ່ເຊື່ອແລະຍອມຈຳນົນຢ່າງແທ້ຈິງ. ແລະບໍ່ແມ່ນພຽງແຕ່ລູກສິດທີ່ສຸດຍອດທີ່ຈົບໃນໂຮງຮຽນພຣະຄັມພີຫຼືເຊື່ອມາແລ້ວຫຼາຍສິບປີ. ພວກເຮົາສາມາດເຂົ້າໃຈສິ່ງທີ່ເປັນຂອງພຣະເຈົ້າແລະດຳເນີນຊີວິດຕາມໄດ້ເພາະພຣະວິນຍານບໍຣິສຸດຊົງສວມທັບພວກເຮົາ. ເມື່ອສິ່ງນີ້ເກີດຂຶ້ນ, ພຣະເຈົ້າຕິດຕໍ່ສື່ສານສະຕິປັນຍາຜ່ານທາງພຣະວິນຍານຂອງພຣະອົງ. ດ້ວຍການຊ່ວຍເຫຼືອຂອງພຣະວິນຍານ, ພຣະອົງເອງຈະມອບຄວາມສາມາດແລະໂອກາດໃຫ້ກັບພວກເຮົາໃນການສື່ສານກັບສິ່ງທີ່ພຣະອົງໄດ້ສອນພວກເຮົາໃຫ້ກັບຄົນອື່ນ. ດັ່ງນັ້ນການທີ່ພຣະອົງເຮັດ, ພວກເຮົາໄດ້ກາຍເປັນແຫຼ່ງພຣະພອນໃຫ້ແກ່ຄົນອື່ນໂດຍຜ່ານການຊ່ວຍເຫຼືອເຂົາໃຫ້ເຂົ້າໃຈຄວາມຈິງອັນເລິກເຊິ່ງຂອງພຣະເຈົ້າ.

*ເມື່ອໃດທີ່ພຣະວິນຍານບໍຣິສຸດໄດ້ຊ່ວຍທ່ານໃຫ້ເອົາຄວາມຈິງຈາກພຣະຄັມພີມາໃຊ້ໃນຊີວິດທ່ານ?*

## 3. **1 ໂກຣິນໂທ 2:14-16**

*14. ແຕ່ມະນຸດທີ່ມີຈິດໃຈທັມມະດາຈະຮັບສິ່ງເຫລົ່ານັ້ນ ຊຶ່ງເປັນຂອງພຣະວິນຍານແຫ່ງພຣະເຈົ້າກໍບໍ່ໄດ້ ເພາະເຂົາເຫັນວ່າສິ່ງເຫລົ່ານັ້ນເປັນຄວາມໂງ່ ແລະເຂົາບໍ່ສາມາດເຂົ້າໃຈໄດ້ ເພາະວ່າທີ່ຈະເຂົ້າໃຈສິ່ງເຫລົ່ານັ້ນໄດ້ ກໍຕ້ອງອາສັຍພຣະວິນຍານ. 15. ແຕ່ຜູ້ທີ່ຢູ່ຝ່າຍພຣະວິນຍານກໍສັງເກດຮູ້ສິ່ງສາລະພັດໄດ້ ແຕ່ບໍ່ມີໃຜສັງເກດຮູ້ໃຈຜູ້ນັ້ນໄດ້. 16. "ດ້ວຍວ່າຜູ້ໃດໜໍໄດ້ຮູ້ຈັກພຣະທັຍຂອງອົງພຣະຜູ້ເປັນເຈົ້າ ຈຶ່ງຈະສັ່ງສອນພຣະອົງໄດ້" ແຕ່ຝ່າຍເຮົາທັງຫລາຍກໍມີພຣະທັຍຂອງພຣະຄຣິດ.*

ການກາຍມາເປັນຄຣິສະຕຽນບໍ່ແມ່ນເປັນພຽງແຕ່ການປ່ຽນແປງການປະພຶດປະຕິບັດ. ພວກເຮົາຍັງຕ້ອງປະຕິເສດຄວາມຄິດທີ່ວ່າຄວາມເຊື່ອຂອງຄຣິສະຕຽນເປັນເໝືອນກັບການນັບຖືສາສນາທີ່ສຸດຍອດຫຼືການຍົກສູງຕົນເອງສູງເກີນໄປ. ນີ້ແມ່ນການຕີຄວາມໝາຍຜິດອັນໃຫ່ຍຫຼວງຂອງການປ່ຽນແປງກັບສິ່ງທີ່ພຣະຄຣິດໄດ້ສຳແດງໃຫ້ເຫັນເຖິງຄວາມລອດ. ການກາຍເປັນລູກຂອງພຣະເຈົ້າບໍ່ມີຫັຍງທີ່ນ້ອຍໄປກ່ວາການເກີດມາຈາກເບື້ອງເທິງ (ໂຢຮັນ 3:4).

*ຂນະທີ່ເປັນຜູ້ຕິດຕາມພຣະເຢຊູພວກເຮົາເຫັນໂລກທີ່ມີຄວາມແຕກຕ່າງແນວໃດ?*

ໃນເວລາທີ່ບຸກຄົນໃດນຶ່ງກາຍມາເປັນຜູ້ເຊື່ອ, ມັນເປັນຄືກັບວ່າເຂົາໄດ້ຮັບຕາປະທັບໄວ້ທາງຝ່າຍວິນຍານ. ຄົນນີ້ສາມາດເຫັນອານາຈັກຂອງພຣະເຈົ້າ, ບຸກຄົນນີ້ຈະບໍ່ຍ່າງໃນຄວາມມືດອີກຕໍ່ໄປແຕ່ໄດ້ເດີນໄປໃນທາງແຫ່ງຄວາມສວ່າງແລະໄດ້ຮັບວິນຍານໃໝ່. ບຸກຄົນດັ່ງກ່າວໄດ້ຮັບວິໃສທັດທີ່ສລາດທີ່ເຮັດໃຫ້ເຂົາມອງເຫັນຊີວິດໃໝ່, ທີ່ມາຈາກມຸມມອງຂອງພຣະຄຣິດ.

ພຣະຄຳຂອງພຣະເຈົ້າຍັງເວົ້າເຖິງຜູ້ທີ່ບໍ່ໄດ້ບັງເກີດໃໝ່ວ່າເປັນຄົນ "ບໍ່ມີວິນຍານ." ສ່ວນທີ່ບໍ່ໄດ້ຮັບການໄຖ່ຈາກຕົວຂອງມະນຸດເອງທີ່ເອີ້ນວ່າ "ຕົວເກົ່າ" (ໂຣມ 6:6). ບຸກຄົນໆນີ້, ຄົນທີ່ບໍ່ໄດ້ຮັບຄວາມລອດ, ບໍ່ມີຄວາມສາມາດທີ່ຈະໄດ້ຮັບຄວາມຊົມຊື່ນຫຼືເຂົ້າໃຈ

ຄວາມໝາຍເຣື່ອງຂອງພຣະເຈົ້າໄດ້ຢ່າງເຕັມສ່ວນ. ຂະບວນການແນວຄວາມຄິດຂອງບຸກຄົນດັ່ງກ່າວເປັນການເຊື່ອມເສັງທາງວິນຍານ ເມື່ອປຽບທຽບກັບສະຕິປັນຍາອັນສູງສົ່ງເຊິ່ງໃນພຣະຄຳຂອງພຣະເຈົ້າເວົ້າວ່າເປັນຄວາມໂງ່ຈ້າ.

ແຕ່ຄົນທີ່ຢູ່ໃນຄວາມລອດ, ພວກເຮົາໄດ້ຮັບພຣະວິນຍານຂອງພຣະເຈົ້າ. ການປ່ຽນແປງນີ້ເປັນໜ້າອັສຈັນໃຈຫຼາຍທີ່ຜູ້ທີ່ເຊື່ອໄດ້ກາຍເປັນເໝືອນຢ່າງພຣະຄຣິດຫຼາຍຂຶ້ນແລະມີຄຸນຄ່າທາງດ້ານແນວຄວາມຄິດສູງສົ່ງບໍ່ມີຄວາມຄິດທີ່ສອດຄ່ອງກັບຄວາມຄິດຫຼືສະຕິປັນຍາຂອງໂລກອີກຕໍ່ໄປ. ຄວາມແຕກຕ່າງນີ້ຊີ້ໃຫ້ເຫັນໄດ້ເດັ່ນຊັດໃນຜູ້ທີ່ເຊື່ອ. ຄວາມແຕກຕ່າງນີ້ພຣະຄັມພີເອີ້ນຜູ້ທີ່ເຊື່ອນັ້ນວ່າ "ຄົນຕ່າງຊາດແລະເດີນທ່ອງທ່ຽວ" (1 ເປໂຕ 2:11). ປະກອບດ້ວຍທັສນະແນວຄິດໃໝ່, ພວກເຮົາກາຍເປັນຜູ້ມີສະຕິປັນຍາທີ່ສາມາດຕັດສິນ. ລູກຂອງພຣະເຈົ້າປະເມີນທຸກສິ່ງທຸກຢ່າງໂດຍການພິຈາລະນາທາງຝ່າຍຈິດວິນຍານ, ແຕ່ເຂົາຍັງຕ້ອງມີຄວາມກ້າຫານທີ່ຈະປະຕິເສດຄວາມກັງວົນກ່ຽວກັບຄວາມທີ່ບໍ່ພໍໃຈຂອງຄົນອື່ນໃນການກະທຳທີ່ແຕກຕ່າງ, ຄຸນລັກສະນະເຫຼົ່ານີ້ແມ່ນເປັນສ່ວນນຶ່ງຂອງຄວາມໝາຍຂອງການພັດທະນາການມອງເບິ່ງໂລກໃນພຣະຄັມພີ.

*ທ່ານຈະບັນລະຍາຍບາງຄົນຜູ້ທີ່ມີຈິດໃຈຂອງພຣະຄຣິດຢ່າງໃດ?*

## ນຳໃຊ້ໃນຊີວິດ

ພຣະວິນຍານບໍຣິສຸດຊ່ວຍພວກເຮົາໃຫ້ຮູ້ວິທີດຳເນີນຊີວິດຢູ່ໃນຄວາມບໍຣິສຸດ. ເລືອກເອົານຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົດລາຍການ.** ຂຽນເປັນລາຍການຢ່າງລະອຽດຂອງບ່ອນທີ່ທ່ານຕ້ອງການໃຊ້ສະຕິປັນຍາ. ເອົາສິ່ງເຫຼົ່ານັ້ນເຂົ້າຫາພຣະເຈົ້າໃນການອະທິຖານຂອງທ່ານ, ຮ້ອງຂໍການຊີ້ນຳຂອງພຣະວິນຍານບໍຣິສຸດຂອງພຣະເຈົ້າ.
.
- **ປັບປຸງແກ້ໄຂ.** ຈັດການກັບຄວາມປະພຶດແລ້ວຊອກຫາແຫຼ່ງທີ່ມາຂອງຂໍ້ມູນທີ່ຊ່ວຍທ່ານໃນການຕັດສິນໃຈ. ຂໍໃຫ້ພຣະເຈົ້າເຂົ້າມາມີສ່ວນຮ່ວມກັບການຕັດສິນໃຈນັ້ນ, ຈັດປະເພດແຫຼ່ງທີ່ມາຂອງບັນຫາເຊັ່ນ (ການເງິນ...) ຫຼັງຈາກນັ້ນ, ກຳຈັດຄວາມຄິດທີ່ສາມາດນຳທ່ານບໍ່ໃຫ້ສັດຊື່ຫຼືກຳລັງຈະນຳທ່ານໄປໃນທາງຜິດ.

- **ເພື່ອນຮ່ວມງານ.** ຊອກຫາຜູ້ເຊື່ອພຣະເຈົ້າທີ່ສາມາດໃຫ້ຄຳປຶກສາໃນເຣື່ອງນຶ່ງຫຼືຫຼາຍກວ່ານັ້ນທີ່ໄດ້ຈົດຂຽນໄວ້ໃນຂ້າງເທິງນັ້ນ, ຈັດຫາຕາຕະລາງເວລາເພື່ອຊ່ວຍໃຫ້ທ່ານໄດ້ຮ່ວມສາມະຄີທັມນຳກັນຢູ່ເລື້ອຍໆເພື່ອພັດທະນາສະຕິປັນຍາດ້ວຍຄວາມຊ່ວຍເຫຼືອຈາກພຣະເຈົ້າ

ພວກເຮົາໄດ້ຖືກບັນຊາໃຫ້ດຳເນີນຊີວິດຢູ່ໃນຄວາມບໍຣິສຸດ; ພວກເຮົາບໍ່ສາມາດເຮັດໄດ້ດ້ວຍຕົວພວກເຮົາເອງ. ຂໍໃຫ້ພວກເຮົາດຳເນີນຂັ້ນຕອນເຫຼົ່ານີ້ຢ່າງຈິງຈັງເພື່ອສແວງຫາຄວາມຊ່ວຍເຫຼືອຈາກພຣະວິນຍານບໍຣິສຸດ.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**